# ການຄ້າມະນຸດ ທຽບກັບ ການລັກລອບນຳຄົນເຂົ້າເມືອງ

**ການຄ້າມະນຸດ** ກ່ຽວຂ້ອງກັບການໃຊ້ກຳລັງ, ການສໍ້ໂກງ, ຫຼືການບັງຄັບໃຫ້ໃຊ້ແຮງງານ ຫຼື ຂາຍບໍລິການທາງເພດ ຫຼື ຜູ້ຂາຍບໍລິການທາງເພດນັ້ນມີອາຍຸຕ່ຳກວ່າ 18 ປີ.

**ການລັກລອບນຳຄົນເຂົ້າເມືອງ** ແມ່ນການຫຼີກລ່ຽງກົດໝາຍຄົນເຂົ້າເມືອງ ໂດຍເຈດຕະນານຳຄົນບໍ່ແມ່ນພົນລະເມືອງ ແລະ ບໍ່ມີເອກະສານ ເຂົ້າມາໃນສະຫະລັດ ແລະ ການລັກລອບຂົນສົ່ງຄົນແບບຜິດກົດໝາຍ ແລະ ການກັກຂັງຄົນບໍ່ແມ່ນພົນລະເມືອງ ແລະ ບໍ່ມີເອກະສານທີ່ຢູ່ໃນສະຫະລັດແລ້ວ.

## ສິ່ງເຫຼົ່ານີ້ແມ່ນເງື່ອນໄຂທີ່ບໍ່ສາມາດແລກປ່ຽນກັນໄດ້

**ການລັກລອບນຳຄົນເຂົ້າເມືອງ** ແມ່ນອີງໃສ່ການຂົນສົ່ງ ແລະ ແມ່ນເປັນອາດຊະຍາກຳຕໍ່ເຂດແດນ
**ການຄ້າມະນຸດ** ແມ່ນອີງໃສ່ການຂົ່ມຂູ່ຂູດຮີດ ແລະ ແມ່ນເປັນອາດຊະຍາກຳຕໍ່ບຸກຄົນ

BLUE CAMPAIGN
One Voice. One Mission. End Human Trafficking.®

ລາຍງານການຄ້າມະນຸດ ທີ່ເບີ: **1-888-373-7888**
**www.dhs.gov/bluecampaign**

# ການຊີ້ບອກການຄ້າມະນຸດ - ຖາມຕົວທ່ານເອງວ່າ:

- ຜູ້ເຄາະຮ້າຍມີບັດປະຈຳຕົວ ແລະ ເອກະສານເດີນທາງຂອງຕົນເອງ ຫຼືບໍ່?
- ຜູ້ເຄາະຮ້າຍຖືກບອກວ່າຕ້ອງເວົ້າຫຍັງ ກັບສະມາຊິກຊຸມຊົນ, ຄົນງານ, ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ຫຼື ເຈົ້າໜ້າທີ່ກວດຄົນເຂົ້າເມືອງ ຫຼືບໍ່? ມີຄົນອື່ນສື່ສານໃຫ້ກັບຜູ້ເຄາະຮ້າຍ ຫຼືບໍ່?
- ຜູ້ເຄາະຮ້າຍໄດ້ຮັບຄັດເລືອກເພື່ອຈຸດປະສົງໜຶ່ງແຕ່ຖືກບັງຄັບໃຫ້ເຮັດອາຊີບອື່ນ ຫຼືບໍ່?
- ຄ່າຈ້າງຂອງຜູ້ເຄາະຮ້າຍຖືກເກັບຢ່າງຜິດກົດໝາຍເພື່ອຊຳລະໜີ້ສິນ ຫຼື ຄ່າທຳນຽມ ຫຼືບໍ່? (ການຈ່າຍຄ່າທຳນຽມລັກລອບຂົນສົ່ງຢ່າງດຽວ ບໍ່ຖືວ່າແມ່ນການຄ້າມະນຸດ.)
- ຜູ້ເຄາະຮ້າຍຖືກບັງຄັບໃຫ້ຂາຍບໍລິການທາງເພດ ຫຼືບໍ່?
- ຜູ້ເຄາະຮ້າຍ ຫຼື ຄອບຄົວຂອງພວກເຂົາ ຖືກຂົ່ມຂູ່ ຄຸກຄາມດ້ວຍອັນຕະລາຍ ຫຼືບໍ່ ຖ້າພວກເຂົາພະຍາຍາມຈະອອກໄປ?
- ຜູ້ເຄາະຮ້າຍຖືກຄຸກຄາມດ້ວຍການເນລະເທດ ຫຼື ຖືກຕັ້ງຂໍ້ຫາທາງອາຍາ ຫຼືບໍ່?
- ຜູ້ເຄາະຮ້າຍໄດ້ຮັບອັນຕະລາຍ, ຂາດອາຫານ, ນ້ຳ, ການນອນຫຼັບ, ການເບິ່ງແຍງທາງການແພດ, ຫຼື ເຂົ້າຂອງຈຳເປັນໃນຊີວິດອື່ນໆ ຫຼືບໍ່?
- ຜູ້ເຄາະຮ້າຍສາມາດຕິດຕໍ່ກັບໝູ່ເພື່ອນ ຫຼື ຄອບຄົວໄດ້ໂຢ່າງອິດສະຫຼະ ໂດຍບໍ່ຖືກບັງຄັບ ຫຼື ຖືກຕິດຕາມ ຫຼືບໍ່?
- ຜູ້ເຄາະຮ້າຍມີອາຍຸຕ່ຳກວ່າ 18 ປີ ແລະ ກ່ຽວຂ້ອງກັບການຂາຍບໍລິການທາງເພດ ຫຼືບໍ່?
- ຜູ້ຖືກເຄາະຮ້າຍອາໄສຢູ່ໃນບ້ານທີ່ບໍ່ໄດ້ມາດຕະຖານ ຫຼືບໍ່?